## II. ສະພາບການຊື້-ຂາຍຮຸ້ນ ປະຈຳວັນທີ 23 -28 ທັນວາ 2016

### 1. ສະພາບການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບຕ່າງປະເທດ

ດັດຊະນີຕະຫຼາດຫຼັກຊັບຕ່າງປະເທດ ທຽບໃສ່ອາທິດທີ່ຜ່ານມາ ມີລາຍລະອຽດ ດັ່ງລຸ່ມນີ້:

**ດັດຊະນີຕະຫຼາດຫຼັກຊັບໃນ ສ.ອາເມລິກາ** ດັດຊະນີ S&P500 ປັບຕົວເພີ່ມຂຶ້ນ 0,16%, Dow Jones 0,02% ແລະ NASDAQ 0%,29. ສາເຫດທີ່ພາໃຫ້ດັດຊະນີຕະຫຼາດຫຼັກຊັບໃນ ສ.ອາເມລິກາ ສືບຕໍ່ປັບຕົວເພີ່ມຂຶ້ນຕໍ່ເນື່ອງແມ່ນມາຈາກ ຜົນສໍາຫຼວດຂອງມະຫາວິທະຍາໄລ ມິຊິແກນ ໄດ້ລາຍງານວ່າ ດັດຊະນີຄວາມເຊື່ອໝັ້ນຂອງຜູ້ບໍລິໂພກໃນປະເທດ ປະຈໍາເດືອນ ທັນວາ ແມ່ນຢູ່ທີ່ 98,2 ເຊິ່ງສູງກວ່າທີ່ບັນດານັກວິເຄາະຄາດການທີ່ 98,0 ແລະ ສູງກວ່າເດືອນ ພະຈິກ ທີ່ດັດຊະນີຜູ້ບໍລິໂພກແມ່ນຢູ່ທີ່ 93,8 ໂດຍການປັບຕົວເພີ່ມຂຶ້ນດັ່ງກ່າວ ແມ່ນເປັນການປັບຕົວເພີ່ມຂຶ້ນສູງສຸດນັບຕັ້ງແຕ່ເດືອນ ມັງກອນ 2004 ປະກອບກັບ ການລາຍງານ ຍອດຂາຍບ້ານໃໝ່ ຂອງກະຊວງການຄ້າ ສ.ອາເມລິກາ ທີ່ລາຍງານວ່າ ຍອດຂາຍບ້ານໃໝ່ປັບຕົວເພີ່ມຂຶ້ນເຖິງ 5,2% ເມື່ອທຽບລາຍເດືອນ ຫຼື ເພີ່ມຂຶ້ນຈາກ 563.000 ໜ່ວຍ ເປັນ 592.000 ໜ່ວຍ ໃນເດືອນ ພະຈິກ 2016 ເຊິ່ງເປັນລະດັບທີ່ສູງກວ່າທີ່ນັກວິເຄາະຄາດການທີ່ 575.000 ໜ່ວຍ ແລະ ການທີ່ ກະຊວງການເງິນ ສ.ອາເມລິກາ ປະກາດວ່າ GDP ໄຕມາດ 3 ຂອງປະເທດ ແມ່ນມີຢູ່ທີ່ລະດັບ 3,5% ເຊິ່ງເປັນລະດັບທີ່ສູງກວ່າລະດັບຕົວເລກທີ່ເຄີຍມີການປະມານການກັນໃນຄັ້ງທີ 2 ທີ່ລະດັບ 3,2% ໄດ້ສະທ້ອນໃຫ້ເຫັນວ່າເສດຖະກິດຂອງ ສ.ອາເມລິກາ ມີທ່າອ່ຽງທີ່ປັບຕົວເພີ່ມຂຶ້ນຢ່າງຕໍ່ເນື່ອງ ໂດຍຈາກປັດໃຈທີ່ກ່າວມານີ້ ສິ່ງຜົນໃຫ້ດັດຊະນີຕະຫຼາດຫຼັກຊັບ ສ.ອາເມລິກາ ຍັງສາມາດສືບຕໍ່ປັບຕົວເພີ່ມຂຶ້ນໄດ້ໃນອາທິດນີ້.

**ດັດຊະນີຕະຫຼາດຫຼັກຊັບໃນເອີຣົບ** ດັດຊະນີ ຕະຫຼາດຫຼັກຊັບ ຝຣັ່ງ (CAC40) ປັບຕົວເພີ່ມຂຶ້ນ 0,30%, ເຢຍລະມັນ (DAX) 0,03% ແລະ ອັງກິດ (FTSE100) 0,38% ຍົກເວັ້ນ ດັດຊະນີ ຕະຫຼາດຫຼັກຊັບ ລຸກຊໍາບວກ (LUXXX) ປັບຕົວຫຼຸດລົງ -0,53% ແລະ ດັດຊະນີ ຕະຫຼາດຫຼັກຊັບ ເອີຣົບ (Eurofirst 300) -0,11%. ສາເຫດທີ່ພາໃຫ້ດັດຊະນີຕະຫຼາດຫຼັກຊັບໃນເອີຣົບສ່ວນໃຫຍ່ຍັງຄົງສືບຕໍ່ ປັບຕົວເພີ່ມຂຶ້ນ ແມ່ນເນື່ອງຈາກ ສະຫະພັນອຸດສາຫະກໍາອັງກິດ ຫຼື CBI ໄດ້ລາຍງານວ່າ ດັດຊະນີຍອດຂາຍຍ່ອຍຂອງ ປະເທດ ອັງກິດ ປັບຕົວເພີ່ມຂຶ້ນຈາກ 26 ໃນເດືອນ ພະຈິກ ເປັນ 35 ໃນເດືອນ ທັນວາ ເຊິ່ງເປັນລະດັບສູງສຸດໃນຮອບຫຼາຍກວ່າ 1 ປີ ຈາກຍອດຂາຍທີ່ເພີ່ມຂຶ້ນຂອງ ຮ້ານຂາຍເຄື່ອງນຸ່ງ ແລະ ເຄື່ອງກໍ່ສ້າງ ປະກອບ ການທີ່ ທະນາຄານກາງ ສະວິເດັນ ປະກາດຮັກສາອັດຕາດອກເບ້ຍນະໂຍບາຍທີ່ລະດັບ -0,50% ແລະ ປະກາດຂະຫຍາຍວົງເງິນຊື້ຄືນພັນທະບັດຕາມມາດຕະການຜ່ອນຄາຍທາງປະລິມານ ຫຼື QE ອີກ 30 ຕື້ໂຄນາ ຫຼື 3,2 ຕື້ໂດລ້າສະຫະລັດ ໃນຊ່ວງເຄິ່ງປີທໍາອິດຂອງປີ 2017 ເພື່ອກະຕຸ້ນເສດຖະກິດປະເທດ ເຊັ່ນດຽວກັບທາງ ທະນາຄານກາງ ຂອງ ປະເທດ ເຢຍລະມັນ ກໍ່ໄດ້ອອກມາສະແດງຄວາມເຊື່ອໝັ້ນວ່າ ເສດຖະກິດຂອງປະເທດຕົນວ່າ ເສດຖະກິດຂອງປະເທດເຢຍລະມັນຈະຍັງຄົງມີສະຖຽນລະພາບ ແລະ ຍັງຄົງມີການຂະຫຍາຍຕົວ ໂດຍຈາກບັນດາປັດໃຈດັ່ງທີ່ກ່າວມານີ້ ສິ່ງຜົນໃຫ້ດັດຊະນີຕະຫຼາດຫຼັກຊັບໃນເອີຣົບ ສ່ວນໃຫຍ່ປັບຕົວເພີ່ມຂຶ້ນ ເຖິງແມ່ນວ່າ ຜູ້ລົງທຶນຈະຍັງຄົງມີຄວາມກັງວົນຕໍ່ກັບສະຖານະການຄວາມສ່ຽງໃນການດໍາເນີນທຸລະກິດຂອງ ທະນາຄານ Monte dei Paschi di Siena (BMPS) ເຊິ່ງເປັນທະນາຄານເກົ່າແກ່ທີ່ສຸດໃນໂລກ (ກໍ່ຕັ້ງໃນປີ 1472) ແລະ ທັງເປັນທະນາຄານໃຫຍ່ອັນດັບ 3 ຂອງປະເທດ ອີຕາລີ ທີ່ບໍ່ສາມາດຊອກຫາຜູ້ຊື້ຮຸ້ນເພື່ອລະດົມທຶນ 5 ຕື້ຢູໂຣ ແລະ ບໍ່ສາມາດຮັບຄວາມຊ່ວຍເຫຼືອຈາກລັດຖະບານໄດ້ຕາມກົດລະບຽບ ໃໝ່ຂອງສະຫະພາບເອີຣົບ.

**ດັດຊະນີຕະຫຼາດຫຼັກຊັບໃນອາຊີ**: ດັດຊະນີ ຕະຫຼາດຫຼັກຊັບ ຍີ່ປຸ່ນ (NIKKEI225) ປັບຕົວຫຼຸດລົງ -0,21%, ສສ. ຫວຽດນາມ (HOCHIMIN) -0,46%, ດັດຊະນີ ສປ.ຈີນ (SHANGHAI) -0,73%, ສປ.ຈີນ (SHENZHEN) -0,82%, ມຽນມ້າ (MYANPIX) -7,30%, ສສ. ຫວຽດນາມ (HANOI) -1,72%, ອິນໂດເນເຊຍ (JCI) -0,17%, ຮ່ອງກົງ (HANGSHENG) -1,08%, ສິງກະໂປ (STRAIT TIMES) -0,55% ມາເລເຊຍ (FBMLCI) -0,61%, ໄຕ້ຫວັນ (TWSE) -1,03%, ຟີລິບປິນ (PCOMP) -0,42%, ອາຊຽນ 40 (ASEAN 40) -0,15% ຍົກເວັ້ນ ຕະຫຼາດຫຼັກຊັບ ສ.ເກົາຫຼີ

(KOSPI) ປັບຕົວເພີ່ມຂຶ້ນ 0,21%, ໄທ (SET) 0,56% ແລະ ອົດສະຕາລີ (S&P/ASX200) 0,26% ແລະ ກຳປູເຈຍ (CSX) 6,21% ສາເຫດທີ່ເຮັດໃຫ້ ດັດຊະນີຕະຫຼາດຫຼັກຊັບໃນອາຊີສ່ວນໃຫ່ຍປັບຕົວຫຼຸດລົງແມ່ນເນື່ອງຈາກ ນັກລົງທຶນຂາດຄວາມເຊື່ອໝັ້ນໃນການລົງທຶນໃນຊ່ວງເວລາຢຸດຍາວໃນຊ່ວງວັນ ປີໃໝ່ສາກົນ ເນື່ອງຈາກນັກລົງທຶນຍັງຄົງມີຄວາມກັງວົນ ແລະ ບໍ່ແນ່ໃຈຕໍ່ກັບສະຖານະການຂອງຕະຫຼາດຕ່າງປະເທດໃນຊ່ວງເວລາດັ່ງ ເພາະການທີ່ຕະຫຼາດຢຸດທຳການຊື້-ຂາຍຫຼາຍມື້ ຈະສົ່ງຜົນໃຫ້ຜູ້ລົງທຶນມີຄວາມສ່ຽງຕໍ່ການປ່ຽນແປງຂອງສະຖານະການໃນຕ່າງປະເທດ ທີ່ອາດເກີດຂຶ້ນໄດ້ ແລະ ອາດເຮັດໃຫ້ຜູ້ລົງທຶນບໍ່ສາມາດຂາຍຮຸ້ນອອກໄດ້ທັນເວລາ ຈາກສະຖານະການ ແລະ ບັນຍາກາດດັ່ງກ່າວ ຈຶ່ງສົ່ງຜົນເຮັດໃຫ້ດັດຊະນີຕະຫຼາດຫຼັກຊັບໃນອາຊີສ່ວນໃຫຍ່ປັບຕົວຫຼຸດລົງເມື່ອທຽບກັບອາທິດກ່ອນ.

2. **<u>ສະພາບການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ</u>**

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ປິດຢູ່ທີ່ 1.014,55 ຈຸດ ເພີ່ມຂຶ້ນ 0,18% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດມີປະລິມານຊື້-ຂາຍຮຸ້ນທັງໝົດ 195.000 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,00 ຕື້ກີບ ເພີ່ມຂຶ້ນ 109,03% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ່ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 56,20% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 5.390 ກີບ ເພີ່ມຂຶ້ນ 344 ກີບ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 66.600 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 359 ລ້ານກີບ ເພີ່ມຂຶ້ນ 789,29% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງ ຜູ່ລົງທຶນຕ່າງປະເທດ ກວມເອົາ 62,90% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ່ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,44%[1].

ຮຸ້ນຂອງບໍລິສັດຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 4.999 ກີບ ເພີ່ມຂຶ້ນ 6 ກີບ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 128.100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 640,39 ລ້ານກີບ ເພີ່ມຂຶ້ນ 342,42% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງ ຜູ່ລົງທຶນຕ່າງປະເທດ ກວມເອົາ 61,08% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ່ລົງທຶນຕ່າງປະເທດແມ່ນ 13,38%[2].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາປິດ 5.900 ກີບ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ. ໂດຍອາທິດນີ້ຮຸ້ນ LWPC ບໍ່ສາມາດຈັບຄູ່ຊື້-ຂາຍກັນໄດ້. ສັດສ່ວນຖືຄອງຮຸ້ນຂອງຜູ່ລົງທຶນຕ່າງປະເທດແມ່ນ 2,79%[3].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ (PTL) ມີລາຄາປິດ 2.500 ກີບ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ໂດຍອາທິດນີ້ຮຸ້ນ PTL ບໍ່ສາມາດຈັບຄູ່ຊື້-ຂາຍກັນໄດ້. ສັດສ່ວນຖືຄອງຮຸ້ນຂອງຜູ່ລົງທຶນຕ່າງປະເທດ ແມ່ນ 12,66%[4].

ຮຸ້ນຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາປິດ 3.000 ກີບ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ. ມີປະລິມານຊື້-ຂາຍທັງໝົດ 300 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 0,81 ລ້ານກີບ. ໂດຍເປັນການຊື້-ຂາຍຂອງ ຜູ່ລົງທຶນຕ່າງປະເທດ ກວມເອົາ 50% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ SVN ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ່ລົງທຶນຕ່າງປະເທດແມ່ນ 4,20%[5].

---

ລາຄາສະເລຍແມ່ນລາຄາທີ່ສະເລຍຊື້-ຂາຍຕໍ່ຮຸ້ນພາຍໃນອາທິດນັ້ນ;

[1]ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%, 1% ສຳລັບຜູ່ລົງທຶນປະເພດບຸກຄົນ ແລະ 1% ສາລັບຜູ່ລົງທຶນປະເພດສະຖາບັນ;

[2]ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 25%, 1% ສໍາລັບຜູ່ລົງທຶນປະເພດບຸກຄົນ ແລະ 5% ສາລັບຜູ່ລົງທຶນປະເພດສະຖາບັນ;

[3]ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[4]ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[5]ສັດສ່ວນຖືຄອງຮຸ້ນ SVN ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

ຫົວໜ້າພະແນກຄຸ້ມຄອງຕະຫຼາດຫຼັກຊັບ

ທ. ບຸນຈິງ ກອງຄຳ

## ຕາຕະລາງ 1: ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)

| | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລຍ(ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລຍ | ຈຳນວນ | ມູນຄ່າການຊື້-ຂາຍ | ລາຄາສະເລຍ(ກີບ) |
| BCEL | 8.000 | 40.370.000 | 5.046 | 66.600 | 359.005.000 | 5.390 | 732,50 | 789,29 | 344 |
| EDL-GEN | 87.600 | 437.385.000 | 4.993 | 128.100 | 640.390.000 | 4.999 | 46,23 | 46,41 | 6 |
| LWPC | 0 | 0 | 5.900 | 0 | 0 | 5.900 | - | - | - |
| PTL | 300 | 750.000 | 2.500 | 0 | 0 | - | -100 | -100 | - |
| SVN | 0 | 0 | 3.000 | 300 | 810.000 | 3.000 | - | - | - |
| **ທັງໝົດ** | 95.900 | 478.505.000 | 0 | **195.000** | **1.000.205.000** | | 103,34 | 109,03 | |

## ແຜນວາດ 1: ດັດຊະນີຕະຫຼາດຫຼັກຊັບລາວ
## (11 ມັງກອນ 2011 – 27 ທັນວາ 2016)




## ແຜນວາດ 2: ມູນຄ່າການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ
## ( 14 - 27 ທັນວາ 2016)

ຫົວໜ່ວຍ: ລ້ານ ກີບ



### ຕາຕະລາງ 2: ດັດຊະນີຕະຫຼາດຫຼັກຊັບຕ່າງປະເທດ

| ຊື່ດັດຊະນີ | ປະເທດ | ດັດຊະນີໃນອາທິດນີ້ | ດັດຊະນີໃນອາທິດກ່ອນ | ປ່ຽນແປງ | |
|---|---|---|---|---|---|
| | | | | +/- | % |
| I. ສະຫະລັດ | | | | | |
| DOW | ສ.ອາເມລິກາ | 19.945,04 | 19.941,96 | 3,08 | 0,02 |
| NASDAQ | ສ.ອາເມລິກາ | 5.487,44 | 5.471,43 | 16,01 | 0,29 |
| S&P500 | ສ.ອາເມລິກາ | 2.268,88 | 2.265,18 | 3,70 | 0,16 |
| II. ຕະຫຼາດຫຼັກຊັບເອີຣົບ | | | | | |
| Eurofirst 300 | ເອີຣົບ | 1.424,83 | 1.426,37 | (1,54) | (0,11) |
| DAX | ເຢຍລະມັນ | 11.472,24 | 11.468,64 | 3,60 | 0,03 |
| FTSE100 | ອັງກິດ | 7.068,17 | 7.041,42 | 26,75 | 0,38 |
| CAC40 | ຝຣັ່ງ | 4.848,28 | 4.833,82 | 14,46 | 0,30 |
| LUXXX | ລຸກຊໍາບວກ | 1.676,81 | 1.685,82 | (9,01) | (0,53) |
| III. ຕະຫຼາດຫຼັກຊັບອາຊີ | | | | | |
| NIKKEI225 | ຍີ່ປຸ່ນ | 19.403,06 | 19.444,49 | (41,43) | (0,21) |
| KOSPI | ສ.ເກົາຫຼີ | 2.042,17 | 2.037,96 | 4,21 | 0,21 |
| HANGSHENG | ຮ່ອງກົງ | 21.574,76 | 21.809,80 | (235,04) | (1,08) |
| TWSE | ໄຕ້ຫວັນ | 9.109,27 | 9.204,26 | (94,99) | (1,03) |
| SHANGHAI | ສປ. ຈີນ | 3.114,66 | 3.137,43 | (22,77) | (0,73) |
| SHENZHEN | ສປ. ຈີນ | 1.979,73 | 1.996,03 | (16,30) | (0,82) |
| S&P/ASX200 | ອົດສະຕາລີ | 5.627,90 | 5.613,50 | 14,40 | 0,26 |
| IV. ຕະຫຼາດຫຼັກຊັບອາຊຽນ | | | | | |
| ASEAN40 | ອາຊີ | 8.720,60 | 8.734,07 | (13,47) | (0,15) |
| STRAIT TIME | ສິງກະໂປ | 2.885,76 | 2.901,70 | (15,94) | (0,55) |
| SET | ໄທ | 1.517,08 | 1.508,57 | 8,51 | 0,56 |
| FBMLCI | ມາເລເຊຍ | 1.619,68 | 1.629,59 | (9,91) | (0,61) |
| JCI | ອິນໂດເນເຊຍ | 5.102,95 | 5.111,39 | (8,44) | (0,17) |
| PCOMP | ຟີລິບປິນ | 6.658,20 | 6.686,36 | (28,16) | (0,42) |
| HOCHIMIN | ສສ. ຫວຽດນາມ | 663,86 | 666,94 | (3,08) | (0,46) |
| HANOI | ສສ. ຫວຽດນາມ | 78,87 | 80,25 | (1,38) | (1,72) |
| CSX | ກໍາປູເຈຍ | 350,69 | 330,19 | 20,50 | 6,21 |
| LSX | ສປປ. ລາວ | 1.014,55 | 1.005,20 | 9,35 | 0,93 |
| MYANPIX | ມຽນມ້າ | 575,52 | 620,87 | (45,35) | (7,30) |
| V. ດັດຊະນີກຸ່ມທະນາຄານ | | | | | |
| NASDAQ BANK | ສ. ອາເມລິກາ | 3.902,72 | 3.869,99 | 32,73 | 0,85 |
| SET BANK | ໄທ | 490,65 | 482,88 | 7,77 | 1,61 |